ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານແຫ່ງ ສປປ ລາວ ມອບເງິນຊ່ວຍເຫຼືອ ຜູ້ປະສົບໄພນ້ຳຖ້ວມໃນເຂດພາກກາງ ແລະ ພາກໃຕ້




ໃນຕອນບ່າຍຂອງວັນທີ 11 ກັນຍາ 2019 ທີ່ສຳນັກງານຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມອບເງິນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ ແຂວງ ຄຳມ່ວນ, ແຂວງ ສະຫວັນນະເຂດ, ແຂວງ ອັດຕະປື, ແຂວງ ສາລະວັນ, ແຂວງ ຈຳປາສັກ ແລະ ແຂວງ ເຊກອງ ໃນໄລຍະທ້າຍເດືອນ ສິງຫາ ເຖິງ ຕົ້ນເດືອນກັນຍາ 2019 ທີ່ໄດ້ສ້າງຄວາມເສຍຫາຍໃຫ້ແກ່ຊີວິດ ແລະ ຊັບສິນຂອງປະຊາຊົນເປັນຈຳນວນຫຼວງຫຼາຍ. ໃນການມອບ-ຮັບໃນຄັ້ງນີ້ ຕາງໜ້າ ທຫລ ມອບໂດຍ ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ ແລະ ຮັບໂດຍ ທ່ານ ລີປາວ ຢ່າງ, ຫົວໜ້າຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຊຶ່ງມີຈຳນວນເງິນທີ່ມອບ 150.000.000 ກີບ ທັງນີ້ກໍ່ເພື່ອປະກອບສ່ວນເຂົ້າໃນການບັນເທົາຄວາມຫຍຸ້ງຍາກ ແລະ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ກັບເຂົ້າສູ່ສະພາບປົກກະຕິໂດຍໄວ.

**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ